ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 19 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 17 AUG 2017

# ຂໍ້ຕົກລົງ
# ວ່າດ້ວຍ ການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ໃນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມ ລະບຽບວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 005/ຄຄຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ບົດບັນທຶກຂອງກອງປະຊຸມ ຄຄຊ ຄັ້ງທີ III ປະຈຳປີ 2016 ສະບັບເລກທີ 07/ຄຄຊ, ລົງວັນທີ 27 ກຸມພາ 2017;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1191/ຫສນຍ.ກຄສ, ລົງວັນທີ 9 ສິງຫາ 2017;
- ອີງຕາມ ໜັງສືຈາກ ທຄຕລ ມະຫາຊົນ ກ່ຽວກັບການຂໍທິດຊີ້ນຳກ່ຽວກັບການຈັດຕັ້ງຜັນຂະຫຍາຍບາງມະຕິກອງປະຊຸມຜູ້ຖືຮຸ້ນ ຄັ້ງລົງວັນທີ 28 ເມສາ 2017 ສະບັບເລກທີ 203/ທຄຕລ 2017, ລົງວັນທີ 5 ພຶດສະພາ 2017.

**ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

**ມາດຕາ 1** ອະນຸຍາດໃຫ້ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດປະເພດທົ່ວໄປ ລວມກັນທັງໝົດ ສາມາດຖືຄອງຮຸ້ນໃນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ບໍ່ເກີນ 20% ຂອງຈຳນວນຮຸ້ນທັງໝົດ. ໃນນັ້ນ ຜູ້ລົງທຶນຕ່າງປະເທດ ລວມທັງ ປະເພດບຸກຄົນ ແລະ ສະຖາບັນ 1 ລາຍ ສາມາດຖືຄອງຮຸ້ນໄດ້ບໍ່ເກີນ 2% ຂອງຈຳນວນຮຸ້ນທັງໝົດ.

**ມາດຕາ 2** ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານເພຍວັດ, ໜ່ວຍ 6, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-21 7806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການເພີ່ມອັດຕາສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ໃນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 014/ຄລຕ, ລົງວັນທີ 16 ກໍລະກົດ 2013.

**ປະທານ**

ຄະນະກຳມະການຄຸ້ມຄອງ... ປະທານ

ສົມດີ ດວງດີ